ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ ເລກທີ 369 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 26 ມີນາ 2024

# ຂໍ້ຕົກລົງ
# ວ່າດ້ວຍຊັບສິນລໍຖ້າຂາຍຂອງທະນາຄານທຸລະກິດ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 39/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ການຄົ້ນຄວ້າຂອງກົມຄຸ້ມຄອງທະນາຄານທຸລະກິດ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບຊັບສິນລໍຖ້າຂາຍຂອງທະນາຄານທຸລະກິດ ເພື່ອຫຼຸດຜ່ອນຄວາມສ່ຽງດ້ານສະພາບຄ່ອງຂອງທະນາຄານທຸລະກິດ ແນໃສ່ເຮັດໃຫ້ທະນາຄານທຸລະກິດ ມີຄວາມໝັ້ນຄົງ, ເຂັ້ມແຂງ ແລະ ຍືນຍົງ.

**ມາດຕາ 2 ຊັບສິນລໍຖ້າຂາຍຂອງທະນາຄານທຸລະກິດ**

ຊັບສິນລໍຖ້າຂາຍຂອງທະນາຄານທຸລະກິດ ແມ່ນ ຊັບສິນທີ່ໄດ້ມາຈາກການຊໍາລະໜີ້, ຊັບສິນທີ່ໄດ້ຮັບສິດໃນການຂາຍ ແລະ ຊັບສິນທີ່ຢຸດນໍາໃຊ້ ຊຶ່ງທະນາຄານທຸລະກິດ ໄດ້ບັນທຶກໄວ້ໃນບັນຊີຂອງຕົນ ເພື່ອລໍຖ້າຂາຍ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບ ທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ທະນາຄານທຸລະກິດ** ໝາຍເຖິງ ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ສ້າງຕັ້ງ ແລະ ດໍາເນີນທຸລະກິດ ຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ;

2. **ຊັບສິນທີ່ຢຸດນຳໃຊ້** ໝາຍເຖິງ ອະສັງຫາລິມະຊັບ ແລະ ຊັບສິນບັດຄົງທີ່ອື່ນ ທີ່ທະນາຄານທຸລະກິດ ຢຸດນຳໃຊ້ ໃນການດຳເນີນທຸລະກິດ, ເປັນທີ່ພັກຂອງພະນັກງານ ແລະ ອື່ນໆ;

3. **ຫຼັກຊັບຄ້ຳປະກັນ** ໝາຍເຖິງ ຊັບສິນທຸກປະເພດ ທີ່ນຳໃຊ້ຄ້ຳປະກັນການປະຕິບັດພັນທະຂອງລູກໜີ້ ລວມທັງຊັບສິນທີ່ລູກໜີ້ນຳມາປ່ຽນແທນ ຫຼື ເພີ່ມຕື່ມໃສ່ຫຼັກຊັບຄ້ຳປະກັນໃນເບື້ອງຕົ້ນ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4. **ລູກໜີ້ລາຍໃຫຍ່** ໝາຍເຖິງ ຜູ້ກູ້ຢືມ ທີ່ທະນາຄານທຸລະກິດ ໄດ້ສະໜອງສິນເຊື່ອໃຫ້ ແຕ່ສິບສ່ວນຮ້ອຍ (10%) ຂຶ້ນໄປ ຂອງທຶນຂັ້ນ ໜຶ່ງ ຂອງຕົນ;

5. **ມູນຄ່າຕາມບັນຊີ** ໝາຍເຖິງ ມູນຄ່າຂອງຊັບສິນ ທີ່ບັນທຶກໄວ້ທາງບັນຊີ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດ;

6. **ບໍລິສັດປະເມີນມູນຄ່າຊັບສິນ** ໝາຍເຖິງ ບໍລິສັດທີ່ໃຫ້ບໍລິການປະເມີນມູນຄ່າຊັບສິນ ຊຶ່ງສ້າງຕັ້ງ ແລະ ດຳເນີນທຸລະກິດ ຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ເຄື່ອນໄຫວຢູ່ ສປປ ລາວ.

## ໝວດທີ 2
## ການຮັບ ແລະ ການບັນທຶກບັນຊີ ຊັບສິນລໍຖ້າຂາຍ

**ມາດຕາ 5 ການຮັບເອົາຊັບສິນທີ່ໄດ້ມາຈາກການຊຳລະໜີ້**

ຊັບສິນທີ່ໄດ້ມາຈາກການຊຳລະໜີ້ ແມ່ນ ຫຼັກຊັບຄ້ຳປະກັນ ຫຼື ຊັບສິນອື່ນ ທີ່ທະນາຄານທຸລະກິດ ໄດ້ມາຈາກລູກໜີ້ ຫຼື ເຈົ້າຂອງຊັບສິນ ເພື່ອຊຳລະໜີ້ໃຫ້ແກ່ລູກໜີ້.

ໃນການຮັບເອົາຊັບສິນທີ່ໄດ້ມາຈາກການຊຳລະໜີ້ ທະນາຄານທຸລະກິດ ຕ້ອງປະເມີນມູນຄ່າຊັບສິນດັ່ງກ່າວ ຕາມແຕ່ລະກໍລະນີ ດັ່ງນີ້:

1. ການຮັບເອົາຫຼັກຊັບຄ້ຳປະກັນ ຫຼື ຊັບສິນອື່ນ ທີ່ເປັນສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ໃຫ້ນຳໃຊ້ມູນຄ່າ ທີ່ປະເມີນຕາມການຕົກລົງກັນ ລະຫວ່າງ ທະນາຄານທຸລະກິດ ແລະ ລູກໜີ້ ຫຼື ເຈົ້າຂອງຊັບສິນ;

2. ການຮັບເອົາຫຼັກຊັບຄ້ຳປະກັນ ຫຼື ຊັບສິນອື່ນ ທີ່ເປັນອະສັງຫາລິມະຊັບຂອງລູກໜີ້ລາຍໃຫຍ່ ໃຫ້ນຳໃຊ້ມູນຄ່າ ທີ່ປະເມີນໂດຍບໍລິສັດປະເມີນມູນຄ່າຊັບສິນ ແຕ່ບົນພື້ນຖານການຕົກລົງຂັ້ນສຸດທ້າຍ ລະຫວ່າງ ທະນາຄານທຸລະກິດ ແລະ ລູກໜີ້ ຫຼື ເຈົ້າຂອງຊັບສິນດັ່ງກ່າວ, ຍົກເວັ້ນກໍລະນີການຮັບເອົາຫຼັກຊັບຄ້ຳປະກັນ ຫຼື ຊັບສິນອື່ນ ຕາມການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແມ່ນໃຫ້ນຳໃຊ້ມູນຄ່າ ທີ່ພາກສ່ວນກ່ຽວຂ້ອງປະເມີນ.

ການຮັບເອົາຫຼັກຊັບຄ້ຳປະກັນ ຫຼື ຊັບສິນອື່ນນັ້ນ ທະນາຄານທຸລະກິດ ສາມາດໂອນກຳມະສິດມາເປັນຂອງຕົນ ໃນມູນຄ່າທີ່ບໍ່ເກີນມູນຄ່າໜີ້, ເວັ້ນເສຍແຕ່ທະນາຄານທຸລະກິດ ແລະ ລູກໜີ້ ຫຼື ເຈົ້າຂອງຊັບສິນ ໄດ້ຕົກລົງກັນເປັນຢ່າງອື່ນ.

**ມາດຕາ 6 ການບັນທຶກບັນຊີຊັບສິນທີ່ໄດ້ມາຈາກການຊຳລະໜີ້**

ທະນາຄານທຸລະກິດ ຕ້ອງບັນທຶກຫຼັກຊັບຄ້ຳປະກັນ ຫຼື ຊັບສິນອື່ນ ທີ່ລູກໜີ້ນຳມາຊຳລະໜີ້ ເຂົ້າໃນບັນຊີຊັບສິນທີ່ໄດ້ມາຈາກການຊຳລະໜີ້ ນັບແຕ່ວັນໃດໜຶ່ງ ດັ່ງນີ້:

1. ວັນທີ່ໄດ້ຮັບການເຊັນໂອນກຳມະສິດຈາກລູກໜີ້ ຫຼື ເຈົ້າຂອງຊັບສິນ ຫຼື ວັນທີ່ທະນາຄານທຸລະກິດໄດ້ໂອນມາເປັນກຳມະສິດຂອງຕົນ ຕາມກົດໝາຍ ສຳລັບຫຼັກຊັບຄ້ຳປະກັນ ຫຼື ຊັບສິນອື່ນ ຊຶ່ງເປັນສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ທີ່ມີທະບຽນກຳມະສິດ;

2. ວັນທີ່ທະນາຄານທຸລະກິດ ຍຶດເອົາຫຼັກຊັບຄ້ຳປະກັນ ຊຶ່ງເປັນສັງຫາລິມະຊັບ ທີ່ບໍ່ມີທະບຽນກຳມະສິດ.

ການບັນທຶກບັນຊີຊັບສິນທີ່ໄດ້ມາຈາກການຊຳລະໜີ້ ໃຫ້ປະຕິບັດ ດັ່ງນີ້:

1. ໃນກໍລະນີຮັບເອົາຫຼັກຊັບຄ້ຳປະກັນ ຫຼື ຊັບສິນອື່ນ ເພື່ອຊຳລະໜີ້ ທີ່ຢູ່ໃນໃບລາຍງານຖານະການເງິນ ໃຫ້ບັນທຶກເຂົ້າເປັນຊັບສິນລໍຖ້າຂາຍ ຢູ່ໃນໃບລາຍງານຖານະການເງິນ;

2. ໃນກໍລະນີຮັບເອົາຫຼັກຊັບຄ້ຳປະກັນ ຫຼື ຊັບສິນອື່ນ ເພື່ອຊຳລະໜີ້ ທີ່ຕິດຕາມຢູ່ນອກໃບລາຍງານຖານະການເງິນ ໃຫ້ບັນທຶກເຂົ້າເປັນຊັບສິນລໍຖ້າຂາຍ ຢູ່ນອກໃບລາຍງານຖານະການເງິນ. ເມື່ອສາມາດຂາຍອອກແລ້ວ ຈຶ່ງບັນທຶກເຂົ້າເປັນລາຍຮັບ.

**ມາດຕາ 7 ການຮັບເອົາຊັບສິນທີ່ໄດ້ຮັບສິດໃນການຂາຍ**

ຊັບສິນທີ່ໄດ້ຮັບສິດໃນການຂາຍ ແມ່ນ ຫຼັກຊັບຄ້ຳປະກັນ ຫຼື ຊັບສິນອື່ນ ທີ່ລູກໜີ້ໄດ້ມອບສິດໃນການຂາຍໃຫ້ແກ່ທະນາຄານທຸລະກິດ ໃນກໍລະນີທີ່ລູກໜີ້ບໍ່ສາມາດຊຳລະໜີ້ໄດ້.

ການຮັບເອົາຊັບສິນທີ່ໄດ້ຮັບສິດໃນການຂາຍ ແມ່ນຈັດຕັ້ງປະຕິບັດ ໃນກໍລະນີທີ່ທະນາຄານທຸລະກິດ ບໍ່ສາມາດໂອນເອົາຫຼັກຊັບຄ້ຳປະກັນ ຫຼື ຊັບສິນອື່ນ ຈາກລູກໜີ້ ຫຼື ເຈົ້າຂອງຊັບສິນ ມາເປັນກຳມະສິດຂອງຕົນ ຕາມກົດໝາຍ.

ໃນການຮັບເອົາຊັບສິນທີ່ໄດ້ຮັບສິດໃນການຂາຍ ທະນາຄານທຸລະກິດ ຈະລຶບລ້າງໜີ້ ຫຼື ບໍ່ລຶບລ້າງໜີ້ໃຫ້ລູກໜີ້ ກໍໄດ້ ຕາມການຕົກລົງກັນ ລະຫວ່າງ ທະນາຄານທຸລະກິດ ແລະ ລູກໜີ້.

**ມາດຕາ 8 ການບັນທຶກບັນຊີຊັບສິນທີ່ໄດ້ຮັບສິດໃນການຂາຍ**

ທະນາຄານທຸລະກິດ ຕ້ອງບັນທຶກຫຼັກຊັບຄ້ຳປະກັນ ຫຼື ຊັບສິນອື່ນ ເຂົ້າໃນບັນຊີຊັບສິນທີ່ໄດ້ຮັບສິດໃນການຂາຍ ນັບແຕ່ວັນທີ່ທະນາຄານທຸລະກິດ ໄດ້ຮັບສິດໃນການຂາຍ ດ້ວຍການເຊັນມອບສິດ ຈາກລູກໜີ້ ຫຼື ເຈົ້າຂອງຊັບສິນດັ່ງກ່າວ.

ການບັນທຶກບັນຊີຊັບສິນທີ່ໄດ້ຮັບສິດໃນການຂາຍ ໃຫ້ບັນທຶກໄວ້ຢູ່ນອກໃບລາຍງານຖານະການເງິນ.

**ມາດຕາ 9 ການບັນທຶກບັນຊີຊັບສິນທີ່ຢຸດນຳໃຊ້**

ທະນາຄານທຸລະກິດ ຕ້ອງບັນທຶກຊັບສິນທີ່ຢຸດນຳໃຊ້ ເຂົ້າໃນບັນຊີຊັບສິນລໍຖ້າຂາຍ ນັບແຕ່ວັນໃດໜຶ່ງ ດັ່ງນີ້:

1. ວັນທີ່ທະນາຄານທຸລະກິດ ສຳເລັດການຍ້າຍສຳນັກງານ ໄປບ່ອນໃໝ່;
2. ວັນທີ່ທະນາຄານທຸລະກິດ ສຳເລັດການຍຸບເລີກສາຂາ ຫຼື ໜ່ວຍບໍລິການ;
3. ວັນທີ່ທະນາຄານທຸລະກິດ ຕົກລົງ ຫຼື ມີມະຕິ ໃຫ້ຢຸດນຳໃຊ້ເປັນສະຖານທີ່ພັກຂອງພະນັກງານ;
4. ວັນທີ່ທະນາຄານທຸລະກິດ ຕົກລົງ ຫຼື ມີມະຕິ ໃຫ້ຢຸດນຳໃຊ້ຊັບສິນບັດຄັງທີ່ອື່ນ.

## ໝວດທີ 3
## ການຂາຍຊັບສິນລໍຖ້າຂາຍ

**ມາດຕາ 10 ກຳນົດເວລາໃນການຂາຍຊັບສິນລໍຖ້າຂາຍ**

ຊັບສິນລໍຖ້າຂາຍ ທີ່ໄດ້ມາກ່ອນວັນທີ່ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ທະນາຄານທຸລະກິດ ຕ້ອງຂາຍອອກພາຍໃນກຳນົດເວລາ ດັ່ງນີ້:

1. ຊັບສິນທີ່ໄດ້ມາຈາກການຊຳລະໜີ້ ແລະ ຊັບສິນທີ່ໄດ້ຮັບສິດໃນການຂາຍ ຊຶ່ງເປັນສັງຫາລິມະຊັບ:

1) ຊັບສິນທີ່ໄດ້ມາ ໜຶ່ງ (1) ປີ ຂຶ້ນໄປ ໃຫ້ຂາຍອອກ ພາຍໃນກຳນົດເວລາ ສອງ (2) ປີ ນັບແຕ່ວັນທີ່ຂໍ້ຕົກລົງສະບັບນີ້ມີຜົນສັກສິດ;

2) ຊັບສິນທີ່ໄດ້ມາບໍ່ເຖິງ ໜຶ່ງ (1) ປີ ໃຫ້ຂາຍອອກ ພາຍໃນກຳນົດເວລາ ສາມ (3) ປີ ນັບແຕ່ວັນທີ່ຂໍ້ຕົກລົງສະບັບນີ້ມີຜົນສັກສິດ;

2. ຊັບສິນທີ່ໄດ້ຈາກການຊຳລະໜີ້ ແລະ ຊັບສິນທີ່ໄດ້ຮັບສິດໃນການຂາຍ ຊຶ່ງເປັນອະສັງຫາລິມະຊັບ:

1) ຊັບສິນທີ່ໄດ້ມາ ໜຶ່ງ (1) ປີ ຂຶ້ນໄປ ໃຫ້ຂາຍອອກ ພາຍໃນກຳນົດເວລາ ເຈັດ (7) ປີ ນັບແຕ່ວັນທີ່ຂໍ້ຕົກລົງສະບັບນີ້ມີຜົນສັກສິດ;

2) ຊັບສິນທີ່ໄດ້ມາບໍ່ເຖິງ ໜຶ່ງ (1) ປີ ໃຫ້ຂາຍອອກ ພາຍໃນກຳນົດເວລາ ແປດ (8) ປີ ນັບແຕ່ວັນທີ່ຂໍ້ຕົກລົງສະບັບນີ້ມີຜົນສັກສິດ;

3. ຊັບສິນທີ່ຢຸດນຳໃຊ້:

1) ຊັບສິນທີ່ຢຸດນຳໃຊ້ ໜຶ່ງ (1) ປີ ຂຶ້ນໄປ ໃຫ້ຂາຍອອກ ພາຍໃນກຳນົດເວລາ ເຈັດ (7) ປີ ນັບແຕ່ວັນທີ່ຂໍ້ຕົກລົງສະບັບນີ້ມີຜົນສັກສິດ;

2) ຊັບສິນທີ່ຢຸດນຳໃຊ້ບໍ່ເຖິງ ໜຶ່ງ (1) ປີ ໃຫ້ຂາຍອອກ ພາຍໃນກຳນົດເວລາ ແປດ (8) ປີ ນັບແຕ່ວັນທີ່ຂໍ້ຕົກລົງສະບັບນີ້ມີຜົນສັກສິດ.

ຊັບສິນລໍຖ້າຂາຍ ທີ່ໄດ້ມາພາຍຫຼັງວັນທີ່ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ທະນາຄານທຸລະກິດ ຕ້ອງຂາຍອອກ ພາຍໃນກຳນົດເວລາ ແປດ (8) ປີ ນັບແຕ່ວັນທີ່ໄດ້ມາ ຫຼື ຢຸດນຳໃຊ້ ຊັບສິນດັ່ງກ່າວ.

**ມາດຕາ 11 ການຜ່ອນຜັນໄລຍະເວລາໃນການຂາຍຊັບສິນລໍຖ້າຂາຍ**

ຊັບສິນລໍຖ້າຂາຍ ທີ່ໄດ້ຮັບອະນຸຍາດໃຫ້ຜ່ອນຜັນໄລຍະເວລາໃນການຂາຍ ແມ່ນ ຊັບສິນປະເພດອະສັງຫາລິມະຊັບ ທີ່ທະນາຄານທຸລະກິດໄດ້ພະຍາຍາມຂາຍອອກດ້ວຍວິທີການຕ່າງໆແລ້ວ ແຕ່ຂາຍອອກບໍ່ໄດ້ເພາະມີອຸປະສັກໃນການຂາຍອອກ ຕາມກໍລະນີໃດໜຶ່ງ ດັ່ງນີ້:

1. ຕັ້ງຢູ່ໃນເຂດພື້ນທີ່ສ່ຽງ ຫຼື ຕິດກັບພື້ນທີ່ສ່ຽງ ຕາມການກຳນົດຂອງລັດຖະບານ;
2. ມີກຳມະສິດຮ່ວມກັບບຸກຄົນ ຫຼື ນິຕິບຸກຄົນອື່ນ ຊຶ່ງທະນາຄານທຸລະກິດ ບໍ່ໄດ້ຖືກຳມະສິດສ່ວນໃຫຍ່ ຈຶ່ງບໍ່ສາມາດຕັດສິນໃຈຂາຍອະສັງຫາລິມະຊັບດັ່ງກ່າວ ຕາມດຸນພິນິດຂອງຕົນ;
3. ຕັ້ງຢູ່ຫ່າງໄກຈາກເຂດຊຸມຊົນ ຫຼື ເປັນອະສັງຫາລິມະຊັບ ທີ່ມີອາຄານຊຸດໂຊມ ຊຶ່ງເຮັດໃຫ້ເກີດບັນຫາໃນການໂອນກຳມະສິດ;
4. ຕັ້ງຢູ່ໃນເຂດທຸລະກັນດານ, ຫ່າງໄກສອກຫຼີກ ບໍ່ມີຄົນອາໄສຢູ່, ເຂດຊຸມຊົນແອອັດ, ນໍ້າຖ້ວມຂັງ, ຢູ່ໃນແລວໄຟຟ້າແຮງສູງ ຫຼື ຢູ່ລະຫວ່າງການກໍ່ສ້າງເສົາໄຟຟ້າແຮງສູງ ຈົນເປັນອຸປະສັກໃນການໃຊ້ປະໂຫຍດຈາກອະສັງຫາລິມະຊັບດັ່ງກ່າວ;
5. ມີຂໍ້ຈຳກັດດ້ານທົນທາງເຂົ້າ-ອອກ ເຮັດໃຫ້ເປັນອຸປະສັກໃນການເຂົ້າເຖິງ ເປັນຕົ້ນ ທີ່ດິນທີ່ເຂົ້າ-ອອກ ຜ່ານດິນຂອງບຸກຄົນອື່ນ;

6. ຂໍ້ຈຳກັດອື່ນ ທີ່ເປັນອຸປະສັກໃນການຂາຍຊັບສິນອອກ.

ທະນາຄານທຸລະກິດ ຕ້ອງຂາຍຊັບສິນລໍຖ້າຂາຍ ທີ່ມີອຸປະສັກຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຫາ 5 ຂອງມາດຕານີ້ ອອກ ພາຍໃນກຳນົດເວລາ ແປດ (8) ປີ ນັບແຕ່ວັນທີ່ອຸປະສັກນັ້ນໝົດໄປ. ໃນກໍລະນີທີ່ທະນາຄານທຸລະກິດ ຫາກບໍ່ສາມາດຂາຍຊັບສິນດັ່ງກ່າວ ພາຍໃນກຳນົດເວລາທີ່ກຳນົດ ແມ່ນໃຫ້ທະນາຄານທຸລະກິດ ສະເໜີຂໍເພີ່ມໄລຍະເວລາໃນການຖືຄອງ ຕໍ່ກົມຄຸ້ມຄອງທະນາຄານທຸລະກິດ ເປັນແຕ່ລະກໍລະນີ ພ້ອມດ້ວຍເຫດຜົນ, ຄວາມຈຳເປັນ ແລະ ອຸປະສັກ ທີ່ພາໃຫ້ບໍ່ສາມາດຂາຍຊັບສິນ ລວມທັງແຜນການດຳເນີນການ ເພື່ອໃຫ້ສາມາດຂາຍຊັບສິນດັ່ງກ່າວ.

ສຳລັບຊັບສິນລໍຖ້າຂາຍ ທີ່ມີອຸປະສັກ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 6 ຂອງມາດຕານີ້ ຫາກທະນາຄານທຸລະກິດ ບໍ່ສາມາດຂາຍອອກໄດ້ ພາຍໃນກຳນົດເວລາທີ່ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ ແມ່ນໃຫ້ທະນາຄານທຸລະກິດ ສະເໜີຂໍເພີ່ມໄລຍະເວລາໃນການຖືຄອງ ຕໍ່ກົມຄຸ້ມຄອງທະນາຄານທຸລະກິດ ເປັນແຕ່ລະກໍລະນີ ພ້ອມດ້ວຍເຫດຜົນ, ຄວາມຈຳເປັນ ແລະ ອຸປະສັກ ທີ່ພາໃຫ້ບໍ່ສາມາດຂາຍຊັບສິນ ລວມທັງແຜນການດຳເນີນການ ເພື່ອໃຫ້ສາມາດຂາຍຊັບສິນດັ່ງກ່າວ.

**ມາດຕາ 12 ມາດຕະການຕໍ່ກັບຊັບສິນລໍຖ້າຂາຍ ທີ່ບໍ່ສາມາດຂາຍອອກໄດ້**

ທະນາຄານທຸລະກິດໃດ ບໍ່ສາມາດຂາຍຊັບສິນລໍຖ້າຂາຍ ທີ່ບັນທຶກໄວ້ໃນໃບລາຍງານຖານະການເງິນພາຍໃນກຳນົດເວລາທີ່ໄດ້ກຳນົດໄວ້ໃນ ມາດຕາ 10 ແລະ 11 ຂອງຂໍ້ຕົກລົງສະບັບນີ້ ຊຶ່ງບໍ່ໄດ້ຮັບອະນຸຍາດໃຫ້ເພີ່ມໄລຍະເວລາໃນການຖືຄອງ, ທະນາຄານທຸລະກິດດັ່ງກ່າວ ຕ້ອງຫັກເງິນແຮສຳລັບຊັບສິນລໍຖ້າຂາຍ ທຽບກັບມູນຄ່າທາງບັນຊີ ດັ່ງນີ້:

1. ຫ້າສ່ວນຮ້ອຍ (5%) ສຳລັບ ປີທີ ໜຶ່ງ ຫາ ສອງ;
2. ຊາວສ່ວນຮ້ອຍ (20%) ສຳລັບ ປີທີ ສາມ ຫາ ສີ່;
3. ຫ້າສິບສ່ວນຮ້ອຍ (50%) ສຳລັບປີທີ ຫ້າ ຂຶ້ນໄປ.

ໃນນັ້ນ ເດືອນໜຶ່ງ ໃຫ້ຄິດໄລ່ເປັນ ສາມສິບ (30) ວັນ ແລະ ໄລຍະເວລາໃນວັກໜຶ່ງຂ້າງເທິງ ໃຫ້ເລີ່ມນັບທັນທີ ເມື່ອສິ້ນສຸດກຳນົດເວລາທີ່ໄດ້ກຳນົດໄວ້ໃນມາດຕາ 10 ແລະ 11 ຂອງຂໍ້ຕົກລົງສະບັບນີ້.

ການຫັກເງິນແຮ ໃຫ້ປະຕິບັດພາຍໃນກຳນົດເວລາ ສາມສິບ (30) ວັນ ນັບແຕ່ວັນເລີ່ມຕົ້ນກຳນົດເວລາໃນວັກ ໜຶ່ງ ຂອງມາດຕານີ້. ການບັນທຶກບັນຊີການຫັກເງິນແຮ ໃຫ້ປະຕິບັດຕາມລະບຽບການບັນຊີທີ່ທະນາຄານແຫ່ງ ສປປ ລາວ ກຳນົດ.

ກໍລະນີທະນາຄານທຸລະກິດ ບໍ່ສາມາດຂາຍຊັບສິນລໍຖ້າຂາຍດັ່ງກ່າວ ພາຍຫຼັງໄດ້ຫັກເງິນແຮຄົບຖ້ວນຕາມວັກ ໜຶ່ງ ຂອງມາດຕານີ້, ກົມຄຸ້ມຄອງທະນາຄານທຸລະກິດ ຈະພິຈາລະນາກຳນົດມາດຕະການຕາມຄວາມເໝາະສົມ ເພື່ອຮັກສາສະພາບຄ່ອງ ແລະ ຄວາມໝັ້ນຄົງ ຂອງທະນາຄານທຸລະກິດນັ້ນ.

## ໝວດທີ 4
## ການລາຍງານ ແລະ ການເກັບຮັກສາເອກະສານ

**ມາດຕາ 13 ການລາຍງານ**

ທະນາຄານທຸລະກິດ ຕ້ອງລາຍງານກ່ຽວກັບຊັບສິນລໍຖ້າຂາຍ ລວມທັງອຸປະສັກໃນການຂາຍຊັບສິນດັ່ງກ່າວ ແລະ ວັນທີ່ອຸປະສັກນັ້ນໝົດໄປ ໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ເປັນແຕ່ລະໄຕມາດ ຕາມແບບພິມທີ່ທະນາຄານແຫ່ງ ສປປ ລາວ ກຳນົດ.

**ມາດຕາ 14 ການເກັບຮັກສາເອກະສານ**

ທະນາຄານທຸລະກິດ ຕ້ອງເກັບຮັກສາເອກະສານທີ່ກ່ຽວຂ້ອງກັບຊັບສິນລໍຖ້າຂາຍ ໄວ້ຢ່າງໜ້ອຍ ສິບ (10) ປີ ແລະ ຕ້ອງສະໜອງເອກະສານດັ່ງກ່າວ ໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ຕາມການສະເໜີ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 15 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງທະນາຄານທຸລະກິດ ເປັນເຈົ້າການຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ທະນາຄານທຸລະກິດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 16 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງ ໜຶ່ງຮ້ອຍແປດສິບ (180) ວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ ຜູ້ວ່າການ

ບຸນເຫຼືອ ສິນໄຊວໍຣະວົງ